LHF
Lao Heritage Foundation

ສາຍລົບເຢັນ

ເມື່ອລົມຫນາວພັດ ພຣາວ  ລົມຫນາວລະບົມ ອົກລະຖົມຂົ່ມຄື່ນ
ຮັກນັ້ນປານຈະກື່ນ ຮັກນັ້ນບໍ່ຍັງ ຮັກນັ້ນບໍ່ຍື່ນ ຮັກເຄີຍຊື່ນກັບລໍ້າ
ລົມຫນາວມາເຕືອນ ມັນຊັກມັນເຊືອນມັນເຕືອນໃຫ້ຄຶດເຖິງຄໍາ

ສາຍລົມເຢັນພັດມາ ນໍາເອົາກິ່ນບຸຜາໃຫ້ຕົວຂ້າໄດ້ຊົມ
ແສນຊື່ນໃນອາລົມແສນຊື່ນເຫົາໃຈແສນຊື່ນຍາກຊົມ ແສນຍາກຊົມໃຫ້ໄດ້
ທໍາມະຊາດສາຍລົມດີ ມັນພັດມັນວີມັນຕີໃຫ້ຊາບຊື່ນໃຈ

ພັດມາຫລາຍຄັ້ງພັດມາຫລາຍຄາວ ສາຍລົມຫນາວພັດມາ
ເຢັນກາຍຊື່ນອຸລາເຢັນເຍືອກເຢັນເຍືອນເຢັນເຕືອນວິນຍາເຢັນກາຍຍາຂອງເຮົາ
ໂອສາຍລົມເຢັນ ເຄີຍຮັກເຄີຍເຫັນເຄີຍຢູ່ເປັນຄູ່ຄຽງກັນ